04.03

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນ ນະຄອນຫຼວງວຽງຈັນ

ເລກທີ: 010 /ສປນວ

ນະຄອນຫຼວງວຽງຈັນ, ວັນທີ: 15/02/18

ຫ້ອງວ່າການນະຄອນຫຼວງວຽງຈັນ
ເຂົ້າ ເລກທີ 0403
ວັນທີ 19.2.18

# ມະຕິ

## ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນ ນະຄອນຫລວງວຽງຈັນ ວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2018

- ອີງຕາມ ມາດຕາ 77 ຂໍ້ 1 ຂອງລັດຖະທໍາມະນູນແຫ່ງ ສປປ ລາວ ສະບັບປັບປຸງປີ 2015 ແລະ ມາດຕາ 60 ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບປັບປຸງ ເລກທີ 11/ສພຊ, ລົງວັນທີ 14 ພະຈິກ 2016;
- ອີງຕາມ ບົດລາຍງານ ຂອງອົງການປົກຄອງ ນະຄອນຫຼວງວຽງຈັນ, ຄັ້ງວັນທີ 09 ມັງກອນ 2018, ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2017 ແລະ ທິດທາງແຜນການ ປີ 2018.

ຜ່ານການຄົ້ນຄວ້າ, ພິຈາລະນາຢ່າງກວ້າງຂວາງ ແລະ ປະກອບຄໍາເຫັນຢ່າງເລິກເຊິ່ງ ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I.

## ກອງປະຊຸມຕົກລົງ:

### ມາດຕາ 1: ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2018

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ບົດລາຍງານ ແລະ ສະແດງຄວາມຍ້ອງຍໍຊົມເຊີຍ ອົງການປົກຄອງນະຄອນຫລວງວຽງຈັນ ທີ່ໄດ້ມີຄວາມພະຍາຍາມຊີ້ນໍາງພາ ຈັດຕັ້ງປະຕິບັດແຜນດັ່ງກ່າວ ດ້ວຍຈິດໃຈບຸກທະລຸຢ່າງຕັ້ງໜ້າ ເຮັດໃຫ້ຫລາຍຄາດໝາຍທີ່ກໍານົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມ ປີ 2017 ໄດ້ຮັບຜົນສໍາເລັດຫລາຍດ້ານເຊັ່ນ: ການຂະຫຍາຍຕົວໃນລະດັບ 9,63 %, ມູນຄ່າເພີ່ມລວມຍອດຜະລິດຕະພັນພາຍໃນ (GDP) ໄດ້ , 41.182 ຕື້ກີບ ນະຄອນຫລວງວຽງຈັນສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ເສດຖະກິດ-ສັງຄົມສືບຕໍ່ມີການຂະຫຍາຍຕົວ, ການບໍລິຫານລັດຕາມກົດໝາຍໃນຫລາຍຂົງເຂດ ແລະ ຂະແໜງການໄດ້ຮັບການປັບປຸງດີຂຶ້ນ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການຍົກສູງດີຂຶ້ນເປັນກ້າວໆໄປ.

ກອງປະຊຸມເຫັນດີເປັນເອກະພາບຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ປີ 2018 ຊຶ່ງມີຄາດໝາຍສູ້ຊົນແຕ່ລະດ້ານລະອຽດດັ່ງນີ້:

### 1. ຄາດໝາຍດ້ານເສດຖະກິດມະຫາພາກ:

ລວມຍອດມູນຄ່າຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວສະເລ່ຍເພີ່ມຂຶ້ນບໍ່ຫລຸດ 10,5 %, ດ້ວຍມູນຄ່າ 45.450 ຕື້ກີບ, ສະເລ່ຍຕໍ່ຫົວຄົນ 5.490 ໂດລາສະຫະລັດ ຕໍ່ປີ, ໃນນັ້ນ:

### 1.1 ດ້ານໂຄງປະກອບເສດຖະກິດ:

+ ຂະແໜງກະສິກຳ ແລະ ປ່າໄມ້ ເພີ່ມຂຶ້ນ 5,5% ກວມເອົາ 15% ຂອງ GDP;
+ ຂະແໜງອຸດສາຫະກຳ ເພີ່ມຂຶ້ນ 14% ກວມເອົາ 47% ຂອງ GDP;
+ ຂະແໜງບໍລິການ ເພີ່ມຂຶ້ນ 10% ກວມເອົາ 38% ຂອງ GDP;

### 1.2 ດ້ານເສດຖະກິດ:

- ສຸ້ຊິນຜະລິດເຂົ້າເພື່ອບໍລິໂພກ ແລະ ເປັນສິນຄ້າ ເນື້ອທີ່ 68.251 ເຮັກຕາ, ໃຫ້ໄດ້ 318.511 ໂຕນ.
- ສຸ້ຊິນເຮັດໃຫ້ມູນຄ່າສົ່ງອອກສິນຄ້າເພີ່ມຂຶ້ນບັນລຸ 18%.
- ມູນຄ່າສິນຄ້ານຳເຂົ້າເພີ່ມຂຶ້ນບໍ່ໃຫ້ເກີນ 8%.
- ສຸ້ຊິນຜະລິດເຂົ້າອິນຊີ ເນື້ອທີ່ 1.000 ເຮັກຕາ, ຜົນຜະລິດໃຫ້ໄດ້ 3.558 ໂຕນ.
- ສຸ້ຊິນປູກພືດຜັກ ເນື້ອທີ່ 10.678 ເຮັກຕາ, ຜົນຜະລິດໃຫ້ໄດ້ 108.829 ໂຕນ.
- ສຸ້ຊິນປູກພືດຜັກອິນຊີ ເນື້ອທີ່ 170 ເຮັກຕາ, ຜົນຜະລິດໃຫ້ໄດ້ 1.465 ໂຕນ.
- ສຸ້ຊິນປູກສາລີ ເນື້ອທີ່ 1.610 ເຮັກຕາ, ຜົນຜະລິດໃຫ້ໄດ້ 6.880 ໂຕນ.
- ສຸ້ຊິນປູກມັນຕົ້ນ ເນື້ອທີ່ 2.160 ເຮັກຕາ, ຜົນຜະລິດໃຫ້ໄດ້ 50.612 ໂຕນ.
- ສຸ້ຊິນປູກໄມ້ກິນໝາກ ເນື້ອທີ່ 690 ເຮັກຕາ, ຜົນຜະລິດໃຫ້ໄດ້ 11.406 ໂຕນ.
- ສຸ້ຊິນສະໜອງຊີ້ນໝູ ໃຫ້ໄດ້ 234.900 ໂຕ, ຜະລິດຊີ້ນໝູ ໃຫ້ໄດ້ 15.200 ໂຕນ.
- ຂະຫຍາຍການລ້ຽງງົວ ໃຫ້ໄດ້ 52.226 ໂຕ, ສຸ້ຊິນສະໜອງຊີ້ນງົວ ບັນລຸ 60% ຂອງຄວາມຕ້ອງການຕົວຈິງ.
- ສຸ້ຊິນສະໜອງສັດປີກໃຫ້ໄດ້ 2.675.000 ໂຕ, ຈຳນວນ 2.800 ໂຕນ, ຜະລິດໄຂ່ ໃຫ້ໄດ້ 9.700 ໂຕນ.
- ຜະລິດປາກະຊັງ ໃຫ້ໄດ້ 3.285 ກະຊັງ, ສະໜອງຊີ້ນປາ ຈຳນວນ 23.600 ໂຕນ.
- ສຸ້ຊິນໃຫ້ນັກທ່ອງທ່ຽວເຂົ້າມານະຄອນຫລວງວຽງຈັນບໍ່ໃຫ້ຫຼຸດ ປະມານ 2 ລ້ານເທື່ອຄົນ .

### 1.3 ດ້ານງົບປະມານ:

- ລາຍຮັບງົບປະມານລວມໃຫ້ໄດ້ຕ່ຳສຸດ ຈຳນວນ **1.212,24** ຕື້ກີບ.
- ລາຍຈ່າຍງົບປະມານລວມບໍ່ໃຫ້ເກີນ ຈຳນວນ **637,97** ຕື້ກີບ.
- ເກີນດຸນຕາມແຜນການລວມ ຈຳນວນ 574,27 ຕື້ກີບ.

  ໃນນັ້ນ: ນະຄອນຫລວງວຽງຈັນ ດຸ່ນດ່ຽງໃຫ້ສູນກາງ **574,27** ຕື້ກີບ.

### 1.4 ດ້ານເງິນຕາ:

- ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕົວເລກດຽວ, ຮັກສາອັດຕາແລກປ່ຽນ ໃຫ້ມີສະຖຽນລະພາບ, ເງິນກີບແຂງຄ່າ ຫລື ອ່ອນຄ່າ ຢູ່ໃນລະດັບບໍ່ກາຍ 5% ຕໍ່ປີ ເມື່ອທຽບກັບເງິນຕາຕ່າງປະເທດສະກຸນຫລັກ.

## 2. ຄາດໝາຍແຫຼ່ງທຶນເພື່ອພັດທະນາ:

ຄາດຄະເນຄວາມຕ້ອງການທຶນລວມເພື່ອການພັດທະນາທັງໝົດປະມານ **15.500** ຕື້ກີບ, ເທົ່າກັບ **34,10%** ຂອງ GDP .

**1)** ການລົງທຶນຂອງລັດຈາກງົບປະມານພາຍໃນຂອງນະຄອນຫລວງວຽງຈັນ ມີທັງໝົດ **708** ໂຄງການ, ມູນຄ່າ **99,88** ຕື້ກີບ; ກວມເອົາ 0,64 % ຂອງການລົງທຶນລວມທັງໝົດ; ໃນນັ້ນທຶນພາຍໃນປົກກະຕິ

ຈຳນວນ **95,48** ຕື້ກີບ ແລະ ທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຈຳນວນ **4,40** ຕື້ກີບ, ຊຶ່ງມີລາຍລະອຽດດັ່ງນີ້:

### 1.1 ປ້ອງທຶນພາຍໃນປົກກະຕິ ໂດຍຈັດສັນຕາມອັດຕາສ່ວນດັ່ງນີ້:

+ ທຶນໂຄງການຊຳລະໜີ້ ຈຳນວນ **258** ໂຄງການ, ມູນຄ່າ **33,11** ຕື້ກີບ; ກວມເອົາ 34,68% ;
+ ທຶນໂຄງການສືບຕໍ່ ຈຳນວນ **307** ໂຄງການ, ມູນຄ່າ **49,38** ຕື້ກີບ; ກວມເອົາ 51,72%;
+ ທຶນໂຄງການສະເໜີໃໝ່ ຈຳນວນ **113** ໂຄງການ, ມູນຄ່າ **11,03** ຕື້ກີບ; ກວມເອົາ 11,56%; ໃນນີ້ເປັນໂຄງການສິ່ງເສີມວິຊາການ ຈຳນວນ 59 ໂຄງການ, ມູນຄ່າ 3,80 ຕື້ກີບ.
+ ທຶນສົມທົບໃສ່ໂຄງການຊ່ວຍເຫລືອເພື່ອການພັດທະນາ ຈຳນວນ **15** ໂຄງການ, ໃນນັ້ນໄດ້ຂຶ້ນແຜນສົມທົບທຶນ ຈຳນວນ 12 ໂຄງການ, ມູນຄ່າ **1,95** ຕື້ກີບ; ກວມເອົາ 2,04 %;

ໃນນີ້ມີ:

❖ **ໂຄງການທີ່ມີມູນຄ່າສູງກວ່າ 20 ຕື້ກີບ, ຈຳນວນ 71 ໂຄງການ, ມູນຄ່າ 25,64 ຕື້ກີບ ເຊິ່ງມີ:**
- ໂຄງການຊຳລະໜີ້ສິນ ຈຳນວນ **29** ໂຄງການ, ມູນຄ່າ 6,34 ຕື້ກີບ; ກວມເອົາ 24,73 %.
- ໂຄງການສືບຕໍ່ຈຳນວນ **33** ໂຄງການ, ມູນຄ່າ 17,95 ຕື້ກີບ; ກວມເອົາ 70,00 %.
- ໂຄງການສົມທົບ ODA ຈຳນວນ **8** ໂຄງການ, ໃນນັ້ນໄດ້ຂຶ້ນແຜນສົມທົບທຶນ ຈຳນວນ 5 ໂຄງການ, ມູນຄ່າ **1,15** ຕື້ກີບ; ກວມເອົາ 4,48 %; ສ່ວນ 3 ໂຄງການບໍ່ມີທຶນສົມທົບ.
- ໂຄງການສະເໜີໃໝ່ ຈຳນວນ **1** ໂຄງການ, ມູນຄ່າ **0,20** ຕື້ກີບ; ກວມເອົາ 0.78 %.

❖ **ໂຄງການທີ່ມີມູນຄ່າຕ່ຳກວ່າ 20 ຕື້ກີບ, ຈຳນວນ 622 ໂຄງການ, ມູນຄ່າ 69,84 ຕື້ກີບ; ເຊິ່ງມີ:**
- ໂຄງການຊຳລະໜີ້ສິນ ຈຳນວນ **229** ໂຄງການ, ມູນຄ່າ 26,77 ຕື້ກີບ; ກວມເອົາ 38,34 % .
- ໂຄງການສືບຕໍ່ ຈຳນວນ **274** ໂຄງການ, ມູນຄ່າ 31,42 ຕື້ກີບ; ກວມເອົາ 45 %.
- ໂຄງການສົມທົບ ODA ຈຳນວນ 7 ໂຄງການ, ມູນຄ່າ 0,80 ຕື້ກີບ; ກວມເອົາ 1,15 %.
- ໂຄງການສະເໜີໃໝ່ ຈຳນວນ **112** ໂຄງການ, ມູນຄ່າ 10,83 ຕື້ກີບ; ກວມເອົາ 15,51 %.

**1.2** ທຶນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຈຳນວນ 15 ໂຄງການ, ມູນຄ່າ 4,40 ຕື້ກີບ; ໃນນັ້ນ

- ທຶນໂຄງການຊຳລະໜີ້ສິນ ຈຳນວນ 5 ໂຄງການ, ມູນຄ່າ 0,60 ຕື້ກີບ; ກວມເອົາ 13,64%
- ທຶນໂຄງການສືບຕໍ່ ຈຳນວນ 10 ໂຄງການ, ມູນຄ່າ 3,80 ຕື້ກີບ; ກວມເອົາ 86,36 %

ໃນນີ້:

▪ ໂຄງການທີ່ມີມູນຄ່າສູງກວ່າ **20** ຕື້ກີບ, **ຈຳນວນ 4 ໂຄງການ, ມູນຄ່າ 3,30** ຕື້ກີບ; ເຊິ່ງມີ:
  - ທຶນໂຄງການສືບຕໍ່ ຈຳນວນ 4 ໂຄງການ, ມູນຄ່າ 3,30 ຕື້ກີບ; ກວມເອົາ 100 %

▪ ໂຄງການທີ່ມີມູນຄ່າຕ່ຳກວ່າ **20** ຕື້ກີບ, **ຈຳນວນ 11 ໂຄງການ, ມູນຄ່າ 1,10** ຕື້ກີບ; ເຊິ່ງມີ:
  - ທຶນໂຄງການຊຳລະໜີ້ ຈຳນວນ 5 ໂຄງການ, ມູນຄ່າ 0,60 ຕື້ກີບ; ກວມເອົາ 54,55 %.
  - ທຶນໂຄງການສືບຕໍ່ ຈຳນວນ 6 ໂຄງການ, ມູນຄ່າ 0,50 ຕື້ກີບ; ກວມເອົາ 45,45 %

**2)** ແຫລ່ງທຶນຊ່ວຍເຫລືອທາງການ ເພື່ອການພັດທະນາ (ODA) ໃຫ້ໄດ້ **1.070** ຕື້ກີບ, ກວມເອົາ **6,90%** ຂອງການລົງທຶນລວມທັງໝົດ.

**3)** ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ **(FDI)** ໃຫ້ໄດ້ **11.200** ຕື້ກີບ, ກວມເອົາ **72,26%** ຂອງການລົງທຶນລວມທັງໝົດ.

4) ການລົງທຶນຈາກລະບົບເງິນຕາທະນາຄານພາຍໃນປະເທດ ໃຫ້ໄດ້ **3.130** ຕື້ກີບ, ກວມເອົາ **20,19%** ຂອງການລົງທຶນລວມທັງໝົດ.

## 3. ຄາດໝາຍດ້ານວັດທະນາທຳ-ສັງຄົມ:

### 3.1 ວຽກງານສຶກສາທິການ ແລະ ກິລາ:

- ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ໃນຊັ້ນການສຶກສາກ່ອນໄວຮຽນສະເລ່ຍທົ່ວແຂວງເພີ່ມຈາກ 91,5% ໃຫ້ບັນລຸໄດ້ 92,5%, ສຸ້ຊຸ້ມໃຫ້ຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີສູງກ່ວາ 92% ເພີ່ມຈາກ 6 ເມືອງເປັນ 7 ເມືອງ;
- ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນປະຖົມສຶກສາເພີ່ມຈາກ 101,2% ໃຫ້ບັນລຸໄດ້ 100%;
- ອັດຕາປະລະການຮຽນ ຂອງນັກຮຽນ ປີ 1 ໃຫ້ຫຼຸດລົງຈາກ 3,7% ຍັງເຫຼືອ 3%;
- ອັດຕາຄ້າງຫ້ອງ ຂອງນັກຮຽນ ປີ 1 ໃຫ້ຫຼຸດລົງຈາກ 5,3% ຍັງເຫຼືອ 4%;
- ອັດຕາປະລະການຮຽນຂອງນັກຮຽນ ຊັ້ນປະຖົມສຶກສາ ໃຫ້ຫຼຸດລົງຈາກ 1,5% ຍັງເຫຼືອ 1%;
- ອັດຕາຄ້າງຫ້ອງ ຂອງນັກຮຽນຊັ້ນປະຖົມສຶກສາ ໃຫ້ຫຼຸດລົງຈາກ 2,9% ຍັງເຫຼືອ 2%;
- ອັດຕາລອດເຫລືອ ຮອດ ປີ 5 ເພີ່ມຈາກ 93,8% ໃຫ້ບັນລຸໄດ້ 94,5%;
- ສຸ້ຊຸ້ມໃຫ້ຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນລວມໃໝ່ຊັ້ນປີ 5 ສູງກວ່າ 100% ເພີ່ມຈາກ 7 ເມືອງ ເປັນ 8 ເມືອງ;
- ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ຫລຸດ 98% ;
- ສຸ້ຊຸ້ມໃຫ້ຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນລວມໃໝ່ຊັ້ນມໍ 4 ຂອງນັກຮຽນຍິງ ສູງກວ່າ 75% ເພີ່ມ ຈາກ 7 ເມືອງ ເປັນ 8 ເມືອງ;
- ອັດຕາການປະລະການຮຽນ ຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ໃຫ້ຫຼຸດລົງຈາກ 3,5% ຍັງເຫຼືອ 2,5%;
- ອັດຕາເຂົ້າຮຽນລວມ ຂອງນັກຮຽນຊັ້ນມັດທະຍົມຕອນປາຍ ເພີ່ມຈາກ 77,7% ໃຫ້ບັນລຸໄດ້ 80%;
- ອັດຕາການປະລະການຮຽນຂອງນັກຮຽນ ຊັ້ນມັດທະຍົມຕອນປາຍ ໃຫ້ຫຼຸດລົງຈາກ 3,1% ຍັງເຫຼືອ 2%;
- ຈັດບຳລຸງລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາກອນ ອາຍຸ 15-40 ປີ, ໃຫ້ໄດ້ 1,468 ຄົນ, ບຳລຸງຍົກລະດັບ ມັດທະຍົມຕົ້ນ ໃຫ້ໄດ້ 2,036 ຄົນ, ບຳລຸງຍົກລະດັບ ມັດທະຍົມປາຍ ໃຫ້ປະຊາຊົນຈຳນວນ 1,651 ຄົນ.
- ປະຊາຊົນນະຄອນຫລວງວຽງຈັນໃຫ້ຫັນມາຫຼີ້ນກິລາ ແລະ ອອກກຳລັງກາຍໃຫ້ໄດ້ 30 % ຂອງຈຳນວນ ພົນລະເມືອງ.

### 3.2 ວຽກງານສາທາລະນະສຸກ:

- ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ໃຫ້ຫຼຸດລົງຈາກ 14% ຍັງເຫຼືອ 13% ຂອງປະຊາກອນກຸ່ມເປົ້າໝາຍ;
- ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ລວງສູງບໍ່ໄດ້ມາດຕະຖານໃຫ້ຫຼຸດລົງຈາກ 16% ຍັງເຫຼືອ 15% ຂອງ ປະຊາກອນກຸ່ມເປົ້າໝາຍ;
- ອັດຕາສ່ວນການຕາຍຂອງເດັກ ນ້ອຍລຸ່ມ 1 ປີ/1.000 ໃຫ້ຫຼຸດລົງຈາກ 24% ຍັງເຫຼືອ 20%.
- ອັດຕາສ່ວນການຕາຍຂອງເດັກນ້ອຍ ລຸ່ມ 5 ປີ/1.000 ໃຫ້ຫຼຸດລົງຈາກ 28% ຍັງເຫຼືອ ມີ 25%.
- ອັດຕາສ່ວນການຕາຍຂອງແມ່ ຮັກສາໃຫ້ຢູ່ 35/100.000.
- ອັດຕາສ່ວນການເກີດມີແພດຊ່ວຍ ຈາກ 88% ໃຫ້ບັນລຸໄດ້ 90%.

- ອັດຕາສ່ວນການສັກຢາກັນພະຍາດ ເພີ່ມຈາກ 83,4% ໃຫ້ບັນລຸໄດ້ 90% ຂອງຈຳນວນປະຊາກອນກຸ່ມເປົ້າໝາຍ;
- ອັດຕາສ່ວນການຊົມໃຊ້ນ້ຳສະອາດ ຈາກ 99,86% ໃຫ້ບັນລຸໄດ້ 99,87% ຂອງຈຳນວນຄອບຄົວທັງໝົດ;
- ອັດຕາສ່ວນການຊົມໃຊ້ວິດຖ່າຍ ຈາກ 99,81% ໃຫ້ບັນລຸໄດ້ 99,82% ຂອງຈຳນວນຄອບຄົວທັງໝົດ;
- ອັດຕາສ່ວນການປົກຄຸມປະກັນສຸຂະພາບ ຈາກ 20% ໃຫ້ບັນລຸໄດ້ 40% ຂອງຈຳນວນປະຊາກອນ ທັງໝົດ.

### 3.3 ວຽກງານແຮງງານ ແລະ ສະຫວັດດີການສັງຄົມ:

- ຄວບຄຸມອັດຕາການວ່າງງານຢູ່ໃນລະດັບ 2%
- ພັດທະນາສີມືແຮງງານໃຫ້ໄດ້ 15.000 ຄົນ;
- ຈັດຫາວຽກເຮັດງານທຳໃຫ້ໄດ້ 35.000 ຄົນ;
- ສຸມໃສ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດ ໃຫ້ໄດ້ຈຳນວນ 271 ທ່ານ;

### 3.4 ວຽກງານຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:

- ຂະຫຍາຍຕາໜ່າງໄຫລະໄຄ່ງໃຫ້ໄດ້ 5 ບ້ານ ໃນທົ່ວນະຄອນຫຼວງວຽງຈັນ;
- ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 2.000 ຄອບຄົວ, ບ້ານວັດທະນະທຳໃຫ້ໄດ້ 12 ບ້ານ.
- ສືບຕໍ່ສົ່ງເສີມ ແລະ ຮຽກການລົງທຶນ ພັດທະນາແຫລ່ງທ່ອງທ່ຽວທຳມະຊາດ ຕິດພັນກັບແຫລ່ງທ່ອງທ່ຽວກະເສດໃໝ່ ພຸພະບັງ-ຫ້ວຍຊອນ-ຫ້ວຍຊື້ອ.
- ດຶງດູດນັກທ່ອງທ່ຽວເຂົ້າມາທ່ອງທ່ຽວເຂົ້າມາໃນນະຄອນຫຼວງວຽງຈັນ ໃຫ້ໄດ້ 2,000,000 ເທື່ອຄົນ.

## 4. ຄາດໝາຍດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:

- ດຳເນີນການສຳຫຼວດ ພິສູດຫລັກຖານ ຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ 10.000 ຕອນ.
- ດຳເນີນການສຳຫລວດ, ປັບປຸງ ແລະ ຂຶ້ນສຳມະໂນທີ່ດິນ ໃຫ້ໄດ້ 80.000 ຕອນ.
- ປັກຫລັກໝາຍທີ່ດິນ ອ່າງໂຕ່ງ (ບຶງ,ໜອງທຳມະຊາດ) ຂະໜາດ 10 ເຮັກຕາຂຶ້ນໄປ ໃຫ້ສຳເລັດ.
- ຈັດສັນ, ແບ່ງເຂດການນຳໃຊ້ທີ່ດິນ ເປັນຕົ້ນດິນກະສິກຳ-ປ່າໄມ້ ຈຳນວນ 6 ບ້ານ, ໃນ 2 ເມືອງຄື: ເມືອງສັງທອງ ແລະ ເມືອງຫາດຊາຍຟອງ.

## ມາດຕາ 2: ຮັບຮອງເອົາມາດຕະການ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ປີ 2018:

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາທິດທາງ 13 ຄາດໝາຍ ແລະ 7 ມາດຕະການ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງນະຄອນຫລວງວຽງຈັນ ປີ 2018 ຕາມການສະເຫນີຂອງອົງການປົກຄອງ ນະຄອນຫລວງວຽງຈັນ, ຄຽງຄູ່ກັນນັ້ນກອງປະຊຸມສະເໜີໃຫ້ອົງການປົກຄອງ ນະຄອນຫລວງວຽງຈັນ ເອົາໃຈໃສ່ບາງມາດຕະການເພີ່ມຕື່ມຄືດັ່ງນີ້:

### 1. ພະແນກແຜນການ ແລະ ການລົງທຶນ:

- ເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ຕິດຕາມ, ກວດກາປະເມີນຜົນບັນດາໂຄງການທີ່ໄດ້ອະນຸມັດໄປແລ້ວນັ້ນໃຫ້ມີປະສິດທິຜົນ ເປັນຕົ້ນ: ທາງດ້ານລາຄາຫົວໜ່ວຍ, ບໍລິມາດ ແລະ ປະສິດທິຜົນຂອງ

ໂຄງການ ຕາມທີ່ກົດໝາຍການລົງທຶນຂອງລັດກຳນົດໄວ້, ພ້ອມທັງຊຸກຍູ້ການປະຕິບັດໃຫ້ໄປຕາມແຜນກຳນົດໄວ້ ແລະ ຈັດສັນແບ່ງຄວາມຮັບຜິດຊອບໃຫ້ບັນດາເມືອງໃນການຈັດຕັ້ງປະຕິບັດໂຄງການທີ່ມີມູນຄ່າ 5 ຕື້ກີບລົງມາໃຫ້ຫລາຍຂຶ້ນ.

- ສືບຕໍ່ຕິດຕາມກວດກາຄືນບັນດາໂຄງການລົງທຶນ, ໂຄງການສຳປະທານພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດແລ້ວ ແຕ່ຍັງບໍ່ມີຄວາມຄືບໜ້າ ແລະ ເຄື່ອນໄຫວບໍ່ມີປະສິດທິຜົນ ເພື່ອຮັບປະກັນການຈັດຕັ້ງປະຕິບັດໂຄງການລົງທຶນໃຫ້ໄປຕາມແຜນການ, ລະບຽບຫຼັກການ, ຮັບປະກັນໃຫ້ປະຊາຊົນ ແລະ ລັດໄດ້ຮັບຜົນປະໂຫຍດອັນຊອບທຳ.
- ເອົາໃຈໃສ່ຄົ້ນຄວ້າຈັດລຽງບຸລິມະສິດ ໃນການຊຳລະໜີ້ສິນໂຄງການລົງທຶນຂອງລັດ, ແຜນການຫຼຸດຜ່ອນ ຫຼື ຊຳລະໜີ້ສິນຢ່າງມີແຜນການ ແລະ ປະຕິບັດໃຫ້ເຂັ້ມງວດ.
- ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດຕ້ອງເອົາໃຈໃສ່ຢ່າງເຂັ້ມງວດຕາມທີ່ໄດ້ກຳນົດໄວ້ໃນມາດ    ຕາ 46 ແລະ ມາດຕາ 48 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງ, ຕ້ອງມີການຈັດຕັ້ງການປະມູນຕາມນິຕິກຳທີ່ກ່ຽວຂ້ອງ ແລະ ຮັບປະກັນການເປີດກວ້າງ, ໃຫ້ມີຄວາມໂປ່ງໃສສາມາດກວດສອບໄດ້, ມີຄວາມສະເໝີພາບ ແລະ ຍຸຕິທຳ.
- ເອົາໃຈໃສ່ປັບປຸງກົນໄກບໍລິການທີ່ມີຫຼາຍຂັ້ນຕອນ, ຊັກຊ້າໃຫ້ຫຼຸດລົງ, ຄຸ້ມຄອງປະຕູດຽວ ກຳນົດລະບຽບ , ນະໂຍບາຍເພື່ອດຶງດູດ ແລະ ສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດ, ກໍ່ຄືສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ (SME) ໃຫ້ສາມາດເຂົ້າເຖິງຕະຫຼາດ, ແຫຼ່ງທຶນ ແລະ ສາມາດແຂ່ງຂັນບົນເວທີສາກົນໄດ້.
- ຄົ້ນຄວ້າສະໜອງແຫລ່ງທຶນ, ເອົາໃຈໃສ່ຊຸກຍູ້-ສົ່ງເສີມບັນດາຜູ້ລົງທຶນ ແລະ ຜູ້ປະກອບການທີ່ເປັນພື້ນຖານລາຍຮັບຕົ້ນຕໍຂອງລັດ, ລວມທັງການປັບປຸງບັນດາວິສາຫະກິດຂອງລັດໃຫ້ມີຄວາມເຂັ້ມແຂງ, ຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປີ 2018 ທີ່ວາງອອກໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

## 2. ພະແນກກະສິກຳ ແລະ ປ່າໄມ້:

- ເອົາໃຈໃສ່ຕິດຕາມການຊຸກຍູ້ຂະບວນການຜະລິດສະບຽງອາຫານ, ການຜະລິດເປັນສິນຄ້າ ພ້ອມກັບການຕິດຕາມເຝົ້າລະວັງການລະບາດຂອງສັດຕູພືດ, ພະຍາດສັດລ້ຽງ ແລະ ໄພທຳມະຊາດທີ່ເກີດຂຶ້ນ ພ້ອມນັ້ນກໍ່ຕ້ອງມີແຜນນະໂຍບາຍ ແລະ ມາດຕະການເພື່ອກະກຽມຮັບມືກັບສະພາບການດັ່ງກ່າວຢ່າງທັນການ.
- ເອົາໃຈໃສ່ເຮັດໃຫ້ການຜະລິດສິນຄ້າກະສິກຳມີການຂະຫຍາຍຕົວເພື່ອຮັບປະກັນທັງປະລິມານ ແລະ ຄຸນນະພາບ ແນໃສ່ໃຫ້ເຂົ້າເຖິງຕະຫລາດພາຍໃນ, ພາກພື້ນ ແລະ ສາກົນ ໂດຍຕິດພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ຜະລິດ ແລະ ປຸງແຕ່ງກະສິກຳຢ່າງແຂງແຮງ ໂດຍຕ້ອງສູ້ຊົນເຮັດໃຫ້ການຜະລິດກະສິກຳເປັນສິນຄ້າທີ່ສຳຄັນ ສືບຕໍ່ການຂະຫຍາຍຕົວເປັນພື້ນຖານທາງດ້ານເສດຖະກິດ.
- ສືບຕໍ່ປະຕິບັດຄຳສັ່ງເລກທີ 15/ນຍ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ການກວດກາ ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ຢ່າງເຂັ້ມງວດ ເພື່ອເຮັດໃຫ້ການບຸກລຸກຕັດໄມ້ທຳລາຍປ່າ ໂດຍສະເພາະເຂດປ່າສະຫງວນແຫ່ງຊາດ, ປ່າສະຫງວນຂອງນະຄອນຫລວງວຽງຈັນ ແລະ ເມືອງໃຫ້ຫລຸດລົງ.
- ສຸມໃສ່ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕິດພັນກັບວຽກງານ 3 ສ້າງໂດຍສະເພາະການກວດກາປະເມີນ ປະສິດທິພາບໃນການຄຸ້ມຄອງນຳໃຊ້ໂຄງການທີ່ໄດ້ລົງທຶນໄປໃນແຕ່ລະຈຸດສຸມນັ້ນໃຫ້ຊັດເຈນ ແລະ ຄວນມີການປັບປຸງ, ແກ້ໄຂ, ຈັດລຽງບຸລິມະສິດໃຫ້ແທດເໝາະກັບການພັດທະນາໃນແຕ່ລະໄລຍະ.

## 3. ພະແນກໂຍທາທິການ ແລະ ຂົນສົ່ງ:

- ເປັນເຈົ້າການໃນການກຳນົດລາຄາຫົວໜ່ວຍການກໍ່ສ້າງ ແລະ ການຕິດຕາມກວດກາທາງດ້ານມາດຖານເຕັກນິກໂຄງການ ກໍ່ສ້າງເຄຫາແລະ ຂົວທາງທີ່ລັດໄດ້ລົງທຶນໄປນັ້ນຢ່າງເຂັ້ມງວດ, ວາງແຜນຈັດລຽງບຸລິ

ມະສິດໃນການພັດທະນາເສັ້ນທາງພາຍໃນນະຄອນຫລວງຢ່າງຊັດເຈນ ພ້ອມປຸກລະດົມຊອກຫາແຫລ່ງທຶນ ເພື່ອປະກອບສ່ວນໃນການພັດທະນາພື້ນຖານໂຄງລ່າງຄົມມະນາຄົມ-ຂົນສົ່ງໃຫ້ຄົບຊຸດກົມກຽວ ແລະ ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມໃນແຕ່ລະໄລຍະ.

- ສືບຕໍ່ສ້າງແຜນພັດທະນາຜັງເມືອງ, ແຜນຜັງນະຄອນຫລວງວຽງຈັນ ໃຫ້ເປັນລະບົບຄົບຊຸດ ເພື່ອພັດທະນາຕົວເມືອງໃຫ້ມີຄວາມສະອາດຈົບງາມ.
- ສືບຕໍ່ສ້າງບາງນິຕິກຳລຸ່ມກົດໝາຍໃນຂົງເຂດໂຍທາທິການ ແລະ ຂົນສົ່ງໃຫ້ໄວ ເພື່ອໃຫ້ລັດຖະບານຮັບຮອງ ພ້ອມທັງຜັນຂະຫຍາຍບັນດາກົດໝາຍທີ່ມີແລ້ວນັ້ນໃຫ້ມີຜົນສັກສິດ.

4. **ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:**

- ຮັບຮ້ອນສຸມໃສ່ການອອກໃບຕາດິນຕາມມະຕິຂອງສະພາປະຊາຊົນ ນະຄອນຫລວງວຽງຈັນຮັບຮອງປີ 2018 ໃຫ້ໄດ້ຕາມລະດັບຄາດໝາຍທີ່ວາງໄວ້.
- ເພີ່ມທະວີຄວາມເອົາໃຈໃສ່ແກ້ໄຂບັນຫາການສະໜອງຂໍ້ມູນການຈັດເກັບທີ່ດິນກັບພາກສ່ວນການເງິນໃຫ້ໄວເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດປີ 2018.
- ສືບຕໍ່ສຳຫລວດຖານຂໍ້ມູນ, ຕິດຕາມກວດກາ ຄຸ້ມຄອງການອອກໃບຕາດິນໃຫ້ຊັດເຈນ ປະສານສົມທົບກັບກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການເກັບກຳຂໍ້ມູນຄືນໃໝ່ກ່ຽວກັບໂຄງການອະນຸຍາດສຳປະທານໄປແລ້ວນັ້ນ ໃຫ້ຊຸກຍູ້ຮີບເຮັດສັນຍາສຳປະທານໃຫ້ສຳເລັດ ແລະ ກຳນົດແບ່ງຂັ້ນຄຸ້ມຄອງຕາມພາລະບົດບາດໃຫ້ຈະແຈ້ງ.
- ເອົາໃຈໃສ່ປະເມີນຜົນກະທົບ ແລະ ກຳນົດມາດຕະການ ຕໍ່ສິ່ງແວດລ້ອມຂອງບັນດາໂຄງການລົງທຶນພາຍໃນນະຄອນຫລວງວຽງຈັນຢ່າງເຂັ້ມງວດ ໂດຍສະເພາະການຈັດການສິ່ງເສດເຫລືອ( ຂີ້ເຫຍື້ອ, ເສດຫີນ, ດິນ ແລະ ວັດສະດຸກໍ່ສ້າງ), ການປ່ອຍນ້ຳເປື້ອນ, ການປົກປັກຮັກສາແຫລ່ງນ້ຳ ແລະ ການປ້ອງກັນມົນລະພິດຈາກການກໍ່ສ້າງ.

5. **ພະແນກອຸດສາຫະກຳ ແລະ ການຄ້າ:**

- ເອົາໃຈໃສ່ສົ່ງເສີມນະໂຍບາຍການພັດທະນາອຸດສາຫະກຳສີຂຽວ, ການຜະລິດທີ່ສະອາດ ແລະ ຖ່າຍທອດເຕັກໂນໂລຊີທີ່ປະຢັດພະລັງງານໃນອຸດສາຫະກຳປຸງແຕ່ງ.
- ຊຸກຍູ້, ສົ່ງເສີມການຜະລິດ, ການປຸງແຕ່ງກະສິກຳ, ອຸດສາຫະກຳທີ່ນຳໃຊ້ວັດຖຸດິບພາຍໃນທີ່ເປັນຕ່ອງໂສ້ຢ່າງກົມກຽວລະຫວ່າງທຸລະກິດຂະໜາດໃຫຍ່ດ້ວຍກັນ ຫລື ລະຫວ່າງທຸລະກິດຂະໜາດໃຫຍ່ ກັບ ທຸລະກິດຂະໜາດກາງ ແລະ ທຸລະກິດຂະໜາດນ້ອຍ.
- ສືບຕໍ່ພັດທະນາ ແລະ ສົ່ງເສີມຜະລິດຕະພັນຫັດຖະກຳລາວທີ່ມີທ່າແຮງ, ເປັນເອກະລັກສະເພາະ ແລະ ມີມູນເຊື້ອຂອງທ້ອງຖິ່ນຕ່າງໆຕາມຄວາມຕ້ອງການຂອງຕະຫລາດພາຍໃນ ແລະ ຕ່າງປະເທດ ໃຫ້ມີຄຸນນະພາບສູງເຊັ່ນ: ຕັດຫຍິບ, ການຍ້ອມສີທຳມະຊາດ, ການຕ່ຳຫູກ(ຝ້າຍ ແລະ ໄໝ), ການຈັກສານຫວາຍ , ໄມ້ປ່ອງ, ການແກະສະຫລັກໄມ້, ເຄື່ອງປັ້ນດິນເຜົາ ແລະ ຈັດຕັ້ງກຸ່ມການຜະລິດຫັດຖະກຳໃຫ້ໄດ້ເຂົ້າຮ່ວມງານວາງສະແດງສິນຄ້າທັງພາຍໃນ ແລະ ຕ່າງປະເທດຢ່າງເປັນປົກກະຕິ .
- ຍົກສູງພາລະບົດບາດຕິດຕາມກວດກາລາຄາສິນຄ້າພາຍໃນ, ຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ ແລະ ສິນຄ້າທີ່ມີການລັກລອບ, ປອມແປງ, ໝົດອາຍຸການບໍລິໂພກ - ນຳໃຊ້ ບໍ່ໄດ້ຄຸນນະພາບ,  ຜິດກົດໝາຍຢ່າງເຂັ້ມງວດ .

6. **ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ:**

- ເອົາໃຈໃສ່ຄົ້ນຄວ້າການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝເພື່ອລົບລ້າງຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໂດຍສະເພາະແມ່ນນຳໃຊ້ເຄື່ອງກົນຈັກເຂົ້າໃນການຜະລິດກະສິກຳ, ອຸດສາຫະກຳປຸງແຕ່ງໃຫ້ກາຍເປັນສິນຄ້າ.

7. ພະແນກ ສຶກສາທິການ ແລະ ກິລາ ແລະ ພະແນກ ສາທາລະນະສຸກ:

- ສຸມໃສ່ແກ້ໄຂບັນດາຕົວຊີ້ວັດໃນຂົງເຂດວັດທະນະທຳ-ສັງຄົມ ໂດຍສະເພາະບັນດາຄາດໝາຍທີ່ມີຄວາມສ່ຽງໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ເປັນຕົ້ນ: ຫລຸດຜ່ອນອັດຕາການຄ້າງຫ້ອງຂອງນັກຮຽນ, ອັດຕາປະລະການຮຽນຂອງນັກຮຽນທຸກຊັ້ນຮຽນ, ອັດຕາການຕາຍຂອງແມ່ ແລະ ເດັກ ຢູ່ບັນດາເມືອງ ແລະ ບ້ານທີ່ມີຄວາມສ່ຽງສູງ.
- ເອົາໃຈໃສ່ບຳລຸງສ້າງບຸກຄະລາກອນໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດນະໂຍບາຍຕໍ່ຄູ, ແພດໝໍ ທີ່ປະຕິບັດໜ້າທີ່ຢູ່ເຂດທຸລະກັນດານ ຫ່າງໄກສອກຫລີກ, ແກ້ໄຂບັນຫາອາສາສະໝັກໃນຂົງເຂດສຶກສາ, ສາທາລະນະສຸກ ໃຫ້ເໝາະສົມຕາມມາດຕະຖານ, ສອດຄ່ອງກັບສະພາບ ແລະ ເງື່ອນໄຂຄວາມຕ້ອງການຕົວຈິງ.

8. ພະແນກ ແຮງງານ ແລະ ສະຫວັດດີການສັງຄົມ:

- ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຄຸນງາມຄວາມດີໃນການປະຕິວັດປົດປ່ອຍຊາດຕາມຈຳນວນທີ່ກະຊວງໄດ້ແບ່ງໃຫ້ ໂດຍສຸມໃສ່ເປົ້າໝາຍການປະຕິວັດຕາມດຳລັດເລກທີ 272/ລບ ແລະ ກວດຄືນບັນດາເປົ້າໝາຍທີ່ຍັງເຫລືອໃຫ້ຊັດເຈນເພື່ອສືບຕໍ່ແກ້ໄຂ.
- ປະສານສົມທົບກັບຂະແໜງການ ແລະ ພາກເອກະຊົນທີ່ກ່ຽວຂ້ອງໃນການຮ່ວມມືວາງແຜນກຳນົດສ້າງ ແລະ ພັດທະນາສີມືແຮງງານຫລາຍສາຂາວິຊາຊີບ ໃຫ້ມີຄຸນນະພາບເພື່ອຕອບສະໜອງແກ່ຕະຫລາດແຮງງານ ແລະ ສັງຄົມໃນປັດຈຸບັນ, ສ້າງຖານຂໍ້ມູນຂ່າວສານຕະຫລາດແຮງງານໃຫ້ມີການດັດສົມກຳລັງແຮງງານເພີ່ມໃໝ່.

9. ພະແນກ ຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:

- ເອົາໃຈໃສ່ສົ່ງເສີມ ແລະ ຊຸກຍູ້ການສ້າງບ້ານວັດທະນະທຳ, ຄອບຄົວວັດທະນະທຳໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.
- ເພີ່ມທະວີການຄຸ້ມຄອງ, ພັດທະນາແຫລ່ງທ່ອງທ່ຽວທັງເກົ່າ ແລະ ສ້າງໃໝ່ໃນທົ່ວນະຄອນຫລວງວຽງຈັນ ເພື່ອສົ່ງເສີມການທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດທີ່ມີຫລາຍສີສັນ ໃຫ້ກາຍເປັນແຫລ່ງທ່ອງທ່ຽວສີຂຽວຕິດພັນກັບການອະນຸລັກວັດທະນະທຳ, ຮັກສາສະພາບແວດລ້ອມທີ່ມີລັກສະນະຍືນຍົງ, ມີສ່ວນຮ່ວມຂອງສັງຄົມເຊື່ອມໂຍງເຂົ້າໃນພາກພື້ນ-ສາກົນ ແລະ ຫັນເປັນອຸດສາຫະກຳ-ທັນສະໄໝ ພ້ອມທັງຕອບສະໜອງໃຫ້ແກ່ກິດຈະກຳປີທ່ອງທ່ຽວ ປີ 2018.

10. ພະແນກ ພາຍໃນ:

- ເອົາໃຈໃສ່ໃນການປັບປຸງກົນໄກບໍລິຫານລັດແຕ່ລະຂັ້ນລົງຮອດຂັ້ນບ້ານໃຫ້ມີປະສິດທິຜົນ ໂດຍເລັ່ງໃສ່ປັບປຸງການຈັດຕັ້ງໃຫ້ກະທັດຮັດ ລວມທັງລະບົບປະສານງານລະຫວ່າງ ແຂວງ ແລະ ເມືອງ, ລະຫວ່າງຂະແໜງການດ້ວຍກັນໃຫ້ມີຄວາມຄ່ອງຕົວ, ເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດເພື່ອກ້າວໄປເຖິງການຄຸ້ມຄອງລັດ-ສັງຄົມດ້ວຍກົດໝາຍເທື່ອລະກ້າວ.

11. ພະແນກ ແລະ ອົງການລັດທຽບເທົ່າພະແນກ:

- ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມຂອງສະພາປະຊາຊົນ ນະຄອນຫລວງວຽງຈັນ ຊຸດທີ I ໃຫ້ກາຍເປັນນິຕິກຳ, ເປັນແຜນງານ ແລະ ໂຄງການລະອຽດຢ່າງມີຈຸດສຸມລົງສູ່ຂັ້ນທ້ອງຖິ່ນຮາກຖານ ໂດຍສະເພາະແມ່ນບັນດາເມືອງທຸກຍາກ ພ້ອມນັ້ນກໍ່ໃຫ້ເພີ່ມທະວີ ການຕິດຕາມ ກວດກາຕາມຂະແໜງການສາຍຕັ້ງຂອງຕົນນັບແຕ່ຂັ້ນນະຄອນຫລວງລົງຮອດຂັ້ນບ້ານ.

12. ອົງການປົກຄອງ ນະຄອນຫລວງວຽງຈັນ:

- ເພີ່ມທະວີການປະສານສົມທົບລະຫວ່າງບັນດາພະແນກການຂອງນະຄອນຫລວງວຽງຈັນ ແລະ ເມືອງໃນການຈັດຕັ້ງຜັນຂະຫຍາຍບັນດາຄາດຫມາຍລວມ, ນະໂຍບາຍ ແລະ ມາດຕະການທີ່ອົງການປົກຄອງນະຄອນຫລວງວຽງຈັນ ໄດ້ສະເຫນີຕໍ່ກອງປະຊຸມໃນຄັ້ງນີ້ໃຫ້ສາມາດຈັດຕັ້ງປະຕິບັດໃຫ້ມີຫມາກຜົນຕົວຈິງ ພ້ອມທັງຊຸກຍູ້ ແລະ ແກ້ໄຂກົນໄກການບໍລິຫານລັດໃຫ້ມີຄວາມຄ່ອງຕົວ, ສ້າງກົນໄກການຕິດຕາມກວດກາພາຍໃນຂະແຫນງການໃນການປະຕິບັດກົດຫມາຍ ແລະ ລະບຽບການວາງອອກໃຫ້ເຂັ້ມງວດ.

## ມາດຕາ 3: ການຈັດຕັ້ງປະຕິບັດ:

1. ມອບໃຫ້ ອົງການປົກຄອງ ນະຄອນຫຼວງວຽງຈັນ ຊີ້ນໍາ, ຊຸກຍູ້ບັນດາພະແນກການ, ອົງການລັດທຽບເທົ່າພະແນກການ, ອົງການປົກຄອງທ້ອງຖິ່ນແຕ່ຂັ້ນເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ ແລະ ສ້າງແຜນເຄື່ອນໄຫວຕາມເນື້ອໃນມະຕິສະບັບນີ້ ໃຫ້ເປັນອັນລະອຽດ ແລ້ວສົ່ງໃຫ້ຄະນະປະຈໍາ ສະພາປະຊາຊົນ ນະຄອນຫລວງວຽງຈັນ ພາຍໃນກໍານົດ 15 ວັນລັດຖະການ ພາຍຫລັງໄດ້ຮັບມະຕິສະບັບນີ້ ເພື່ອຈະໄດ້ຕິດຕາມກວດກາເປັນແຕ່ລະໄລຍະ.
2. ມອບໃຫ້ຄະນະປະຈໍາ, ບັນດາກໍາມະການ ແລະ ສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນ ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນຢ່າງເຂັ້ມງວດ.

## ມາດຕາ 4: ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ສະພາປະຊາຊົນ ນະຄອນຫລວງວຽງຈັນ**

**ປະທານ**

ອານຸພາບ ຕຸນາລົມ